**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ**

# ຫົວບົດສອບເສັງຈົບຊັ້ນ ມັດທະຍົມສຶກສາຕອນປາຍ (ມ7) ລະບົບບຳລຸງທົ່ວໄປ

## ສົກຮຽນ: 2022-2023

## ວິຊາ: ສຶກສາພົນລະເມືອງ ເວລາ: 90 ນາທີ

**I. ພາກປະລະໄນ:** ໃຫ້ເລືອກເອົາຄຳຕອບທີ່ຖືກຕ້ອງທີ່ສຸດ**ພຽງຂໍ້ດຽວ** ແລ້ວໝາຍຕິໃສ່ວົງເລັບນີ້ ( ✓ ) ໃສ່ຂໍ້ **(ກ), (ຂ), (ຄ)** ຫຼື **(ງ)** ຕາມທີ່ເລືອກໄດ້ໃສ່ເຈ້ຍຄຳຕອບ.

1. ຂໍ້ໃດແມ່ນສົນທິສັນຍາຮ່ວມກັນລະຫວ່າງຫຼາຍຝ່າຍ?
   (ກ) ທະວິພາຄີ (ຂ) ພະຫຸພາຄີ (ຄ) ອານຸສັນຍາ (ງ) ກະຕິກາສັນຍາ
2. ວັດຖຸປະສົງຂອງການແຕ່ງດອງທາງກົດໝາຍແມ່ນຮັບປະກັນທາງດ້ານໃດ?
   (ກ) ຄວາມເປັນຈິງ (ຂ) ຄວາມປອງດອງ (ຄ) ຄວາມຖືກຕ້ອງ (ງ) ຄວາມສອດຄ່ອງ
3. ອັນໃດເປັນສິ່ງຢັ້ງຢືນວ່າ ທ ຄຳຮັກ ເປັນລູກຂອງ ນາງ ຄຳດີ ແລະ ທ້າວ ຍອດຮັກ?
   (ກ) ໃບຮັບປະກັນ (ຂ) ໃບຢັ້ງຢືນທີ່ຢູ່ (ຄ) ປຶ້ມພາດສປອດ (ງ) ປຶ້ມສຳມະໂນຄົວ
4. ໃຜເປັນຜູ້ຕັດສິນໂທດ ໃສ່ຜູ້ກະທຳຜິດ?
   (ກ) ຈ່າສານ (ຂ) ຕຳຫຼວດ (ຄ) ຜູ້ພິພາກສາ (ງ) ໄອຍະການ
5. ຂໍ້ໃດ **<u>ບໍ່ສາມາດ</u>**ເປັນສິ່ງຢັ້ງຢືນເຖິງການເປັນພົນລະເມືອງລາວທີ່ຖືກຕ້ອງຕາມກົດໝາຍ?
   (ກ) ໃບຢັ້ງຢືນທີ່ຢູ່ (ຂ) ບັດປະຈຳຕົວ (ຄ) ສຳມະໂນຄົວ (ງ) ພາດສປອດ
6. ຫົວໜ່ວຍການເງິນໃດໃນ ສປປ ລາວ ທີ່ **<u>ບໍ່ໃຫ້ບໍລິການ</u>**ທາງການເງິນແກ່ບຸກຄົນທົ່ວໄປ?
   (ກ) ສິນເຊື່ອ (ຂ) ຕະຫຼາດຫຸ້ນ (ຄ) ທະນາຄານກາງ (ງ) ສະຖາບັນຈູລະພາກ
7. ຂໍ້ໃດສະແດງເຖິງ ການພັດທະນາຊັບພະຍາກອນມະນຸດອັນສຳຄັນທີ່ສຸດ?
   (ກ) ສ້າງໃຫ້ມີອາຊີບ (ຂ) ສ້າງໃຫ້ມີອຳນາດ (ຄ) ສ້າງໃຫ້ມີຖານະ (ງ) ສ້າງໃຫ້ມີຄວາມຮູ້
8. ການຈຳຄຸກ **<u>ບໍ່ເຖິງ</u>** 3 ເດືອນແມ່ນນອນໃນສະຖານໃດຂອງກົດໝາຍອາຍາ?
   (ກ) ລະຫຸໂທດ (ຂ) ໂທສານຸໂທດ (ຄ) ຄະຣຸໂທດ (ງ) ການວາງໂທດ
9. ການເສຍພາສີ-ອາກອນ ສະແດງເຖິງການປະຕິບັດພັນທະດ້ານໃດຂອງພົນລະເມືອງ?
   (ກ) ດ້ານສັງຄົມ (ຂ) ດ້ານການເມືອງ (ຄ) ດ້ານເສດຖະກິດ (ງ) ດ້ານວັດທະນະທຳ
10. ກໍລະນີໃດແມ່ນກ່ຽວພັນກັບ ກົດໝາຍອາຍາເປັນຕົ້ນຕໍ?
    (ກ) ພາກຜູ້ເຢົາ (ຂ) ບໍ່ລ້ຽງດູຄອບຄົວ (ຄ) ບັງຄັບເຮັດວຽກ (ງ) ປອມແປງເອກະສານ
11. ຄູ່ບ່າວ-ສາວຈະມີຖານະເປັນຜົວເມຍກັນຕາມ ຮີດຄອງນັບແຕ່ເວລາໃດ?
    (ກ) ສູ່ຂໍ (ຂ) ໝັ້ນໝາຍ (ຄ) ຈົດທະບຽນ (ງ) ບາສີສູ່ຂວັນ
12. ການຕົກລົງຂໍ້ໃດ **<u>ບໍ່ກ່ຽວພັນ</u>**ກັບອາຍຸການຂອງສັນຍາແຮງງານ?
    (ກ) ຄູ່ສັນຍາ (ຂ) ການຄ້າຂາຍ (ຄ) ນາຍຈ້າງກຳນົດ (ງ) ການຈ່າຍເງິນເດືອນ
13. ຂໍ້ໃດທີ່ສະແດງເຖິງມູນມໍລະດົກຂອງແມ່?
    (ກ) ເຮືອນທີ່ໃຫ້ຢູ່ (ຂ) ເງິນທີ່ໃຫ້ຊື້ກິນ (ຄ) ລົດເກົ່າທີ່ຍົກໃຫ້ (ງ) ໂມງທີ່ຊື້ໃຫ້ໃນວັນເກີດ

14. ການຈັດແບ່ງ 50 ຊົນເຜົ່າໃນລາວໃຫ້ເປັນກຸ່ມໝວດດຽວກັນແມ່ນໄດ້ອີງໃສ່ປັດໃຈໃດເປັນອັນຕັດສິນ?

(ກ) ຮີດຄອງຄ້າຍຄືກັນ (ຂ) ພາສາປາກເວົ້າຄ້າຍຄືກັນ

(ຄ) ທີ່ຢູ່ອາໃສຄ້າຍຄືກັນ (ງ) ການດຳລົງຊີວິດຄ້າຍຄືກັນ

15. ຂໍ້ໃດ <u>ບໍ່ສາມາດ</u>ເກີດເປັນຊັບສິນທາງປັນຍາ?

(ກ) ນາງ ພອນ ຕັດເສື້ອຕາມແບບທີ່ຄົ້ນຄິດເອງ (ຂ) ນາງ ພຽນ ປຸງແຕ່ງອາຫານຕາມໃຈມັກ

(ຄ) ນາງ ອ່ອນ ອອກແບບເຮັດຂະໜົມຂອງຕົນເອງ (ງ) ນາງ ລຽນ ປັກແຊ່ວຜ້າຕາມລວດລາຍທີ່ມີໄວ້

16. ຂໍ້ໃດສະແດງເຖິງການ **<u>ບໍ່ເຄົາລົບ</u>**ກົດໝາຍຂອງພົນລະເມືອງ?

(ກ) ອາຍຸ 15 ປີ ໄປຮຽນເສີມສວຍ (ຂ) ອາຍຸ 15 ປີ ໄປຂໍທຶນຮຽນໜັງສື

(ຄ) ອາຍຸ 15 ປີ ໄປເສັງໃບຂັບຂີ່ລົດໃຫຍ່ (ງ) ອາຍຸ 15 ປີ ໄປເຮັດບັດປະຈຳຕົວ

17. ຂໍ້ໃດທີ່ສະແດງເຖິງການເກັບອາກອນ?

(ກ) ຕັດຈາກເງິນເດືອນພື້ນຖານທຸກເດືອນ (ຂ) ເອົາເປີເຊັນຈາກການຂົນສົ່ງສິນຄ້າ

(ຄ) ຫັກເປີເຊັນຈາກການຂາຍເຄື່ອງນຳເຂົ້າ (ງ) ເກັບເປີເຊັນສິນຄ້າຜ່ານດ່ານຊາຍແດນ

18. ກໍລະນີໃດ **<u>ບໍ່ເປັນການ</u>**ກະທຳຜິດທາງກົດໝາຍທີ່ສຸດ?

(ກ) ທ້າວ ສີ ຈູດປ່າເພື່ອປູກມັນຕົ້ນຂາຍ (ຂ) ນາງ ສີ ຂາຍສິນຄ້າບໍ່ໄດ້ມາດຕະຖານ

(ຄ) ທ້າວ ມີ ທຸບຕີຄົນຮ້າຍທີ່ມາຈີ້ເອົາລົດ (ງ) ນາງ ລີ ຫຼອກລວງເອົາໝູ່ໄປຂາຍບໍລິການ

19. ຂໍ້ໃດເປັນການນຳໃຊ້ປະຊາທິປະໄຕທີ່ເໝາະສົມເຂົ້າໃນການເຮັດວຽກງານ?

(ກ) ມອບວຽກໃຫ້ຕາມໜ້າທີ່ (ຂ) ມອບວຽກໃຫ້ຕາມຄຳສັ່ງ

(ຄ) ມອບໃຫ້ຕາມຄວາມຊື້ນເຄີຍ (ງ) ມອບວຽກໃຫ້ຕາມຄຳຕົກລົງ

20. ອັນໃດ **<u>ບໍ່ເປັນ</u>**ຂໍ້ຫ້າມໃນການແຕ່ງດອງທີ່ຖືກຕ້ອງຕາມກົດໝາຍ?

(ກ) ບໍ່ມີເງິນແຕ່ໄປແຕ່ງດອງນຳກັນ (ຂ) ເປັນເພດດຽວກັນແຕ່ໄປແຕ່ງດອງນຳກັນ

(ຄ) ເປັນອ້າຍນ້ອງກັນແຕ່ໄປແຕ່ງດອງນຳກັນ (ງ) ບໍ່ປິ່ນປົວພະຍາດຕິດແປດແຕ່ໄປແຕ່ງດອງນຳກັນ

## II. <u>ພາກອັດຕາໄນ.</u>

1. ຈົ່ງບອກຄວາມໝາຍຂອງການປະດິດສ້າງ?
2. ຄວາມຮັບຜິດຊອບນອກສັນຍາມີຄວາມໝາຍວ່າແນວໃດ?
3. ສປປ ລາວ ແບ່ງອອກມີຈັກກຸ່ມໝວດພາສາ? ແຕ່ລະໝວດມີຈັກຊົນເຜົ່າ?
4. ການພັດທະນາວັດທະນະທຳໃນຂະບວນວິວັດຂອງສັງຄົມປະກອບມີລັກສະນະໃດແດ່?
5. ໜ້າທີ່ຂອງນັກຮຽນ ແລະ ໄວໜຸ່ມໃນການປະກອບສ່ວນວຽກງານ ປກຊ-ປກສ ມີຄືແນວໃດ?

***ຄະນະກຳມະການອອກຫົວບົດສອບເສັງ***